ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

..........໐໐໐★໐໐໐..........

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
ຖະໜົນໄກສອນພົມວິຫານ, ບ້ານ ໂພນພະເນົາ,
ເມືອງ ໄຊເສດຖາ, ຕູ້ ປ.ນ4596,
ນະຄອນຫລວງວຽງຈັນ, ສ.ປ.ປລາວ
ໂທ : (856-21) 453 312, 452 579
ແຟັກ : (856-21) 452 580
E-mail: lncci_frd@yahoo.co

ມະຫາວິທະຍາໄລແຫ່ງຊາດ
ຄະນະວິສະວະກຳສາດ
ເລກທີ: 506
ລົງວັນທີ: 18 ຕຸລາ 17

ເລກທີ 1162 /ສຄອ.ພຣຊ.1

ນະຄອນຫລວງວຽງຈັນ, ວັນທີ 03 OCT 2017

**ຮຽນ:** ທ່ານ ຫົວໜ້າ ຫ້ອງການ ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດ

**ເລື່ອງ:** **ເຊີນເຂົ້າຮ່ວມກອງປະຊຸມສຳມະນາ "ອຸດສາຫະກຳ 4.0"**
**ໃນວັນທີ 01 ພະຈິກ 2017, ທີ່ ສະພາການຄ້າ ແລະອຸດສາຫະກຳແຫ່ງຊາດລາວ**

- ອີງຕາມດຳລັດ ສະບັບເລກທີ 316/ນຍ, ສະບັບລົງວັນທີ 11 ພະຈິກ 2009, ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ.
- ອີງຕາມການຮ່ວມມືລະຫວ່າງ ສຄອ ແຫ່ງຊາດລາວ ແລະ ມະຫາວິທະຍາໄລ SIEGEN ປະເທດເຢຍລະມັນໃນການຈັດກອງປະຊຸມສຳມະນາເຜີຍແຜ່ຄວາມຮູ້ກ່ຽວກັບອຸດສາຫະກຳ 4.0 ໃຫ້ແກ່ພາກລັດ, ທຸລະກິດ ແລະການສຶກສາ.

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຂໍຖືເປັນກຽດເຊີນທ່ານ: ຜູ້ຕາງໜ້າ ຄະນະ ວິສະວະກຳສາດ ຈຳນວນ 03 ທ່ານ *ເຂົ້າກອງປະຊຸມສຳມະນາກ່ຽວກັບ "ອຸດສາຫະກຳ 4.0" ໃນວັນທີ 01 ພະຈິກ 2017, ທີ່ ສະພາການຄ້າ ແລະອຸດສາຫະກຳແຫ່ງຊາດລາວ.* ຈັດໂດຍ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຮ່ວມກັບ ຄະນະວິສະວະກຳສາດ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລ SIEGEN ປະເທດເຢຍລະມັນ.

ຈຸດປະສົງແມ່ນເພື່ອເປັນການປຶກສາຫາລື, ແລກປ່ຽນປະສົບການ ແລະ ໃຫ້ຄວາມຮູ້ແກ່ພາກລັດຖະບານ, ພາກທຸລະກິດລາວ ແລະ ຂະແໜງການສຶກສາ ກ່ຽວກັບຄວາມຮູ້ພື້ນຖານອຸດສາຫະກຳ 4.0 (Industry 4.0) ຊຶ່ງປະຈຸບັນມີການນຳໃຊ້ໃນຫລາຍຂົງເຂດວຽກງານທັງໃນພາກພື້ນ ແລະ ສາກົນ. ໃນກອງປະຊຸມຄັ້ງນີ້ແມ່ນໄດ້ເຊີນຜູ້ບັນຍາຍທີ່ມີປະສົບການຈາກທັງພາຍໃນ ແລະ ຕ່າງປະເທດເພື່ອມາຮ່ວມບັນຍາຍ ແລະ ຜູ້ເຂົ້າຮ່ວມທັງໝົດປະມານ 80 ທ່ານ. (ວາລະກອງປະຊຸມ ແລະ ຟອມລົງທະບຽນຄັດຕິດມາພ້ອມນີ້).

ດັ່ງນັ້ນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຈຶ່ງຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອພິຈາລະນາໃຫ້ກຽດເຂົ້າຮ່ວມງານກອງປະຊຸມສຳມະນາຄັ້ງສຳຄັນດັ່ງກ່າວຂ້າງເທິງຕາມທາງຄວນດ້ວຍ.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ເລຂາທິການ

ຕິດຕໍ່ພົວພັນ:

ໂທ: 020 59598983, 020 9980 0020

021 453312, ແຟັກ: 021 452580